ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນ
(ທົບທວນຄືນ)
ສຳລັບໄລຍະສາມເດືອນ ສິ້ນສຸດ ວັນທີ 31 ມີນາ 2026

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ຂໍ້ມູນທົ່ວໄປຂອງບໍລິສັດ

ຄະນະບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ບໍລິສັດ") ໄດ້ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ພ້ອມທັງເອກະສານລາຍງານທາງການເງິນຂອງ ບໍລິສັດສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2026.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ, ເຊິ່ງຈະຕ້ອງກະກຽມໂດຍອີງຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໃນເອກະສານຊ້ອນທ້າຍຂອງເອກະສານລາຍງານການເງິນ. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະເພື່ອນຳສະເໜີຖານະທາງການເງິນ, ຜົນຂອງການດຳເນີນທຸລະກິດ ແລະ ກະແສເງິນສົດຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະສານລາຍງານ, ຄະນະບໍລິຫານຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການລະເມີດທີ່ສຳຄັນຕໍ່ກັບມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທຸລະກິດຈະບໍ່ສາມາດດຳເນີນຕໍ່ໄປໄດ້.

ຄະນະບໍລິຫານມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງດ້ານບັນຊີທີ່ຖືກບັນທຶກໄວ້ໃນໄດ້ສະແດງເຖິງຄວາມຖືກຕ້ອງຢ່າງເໝາະສົມຢູ່ຕະຫຼອດເວລາກ່ຽວກັບຖານະການເງິນຂອງ ບໍລິສັດ ໃນມື້ທີ່ປິດບັນຊີພ້ອມທັງຮັບປະກັນວ່າ ເອກະສານລາຍງານການເງິນໄດ້ສອດຄ່ອງກັບນະໂຍບາຍທາງດ້ານບັນຊີທີ່ເໝາະສົມ.ຄະນະບໍລິຫານຍັງມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງ ບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາຄວາມບໍ່ໂປ່ງໃສ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສະບັບນີ້.

ການອະນຸມັດເອກະສານລາຍງານການເງິນ

ພວກຂ້າພະເຈົ້າຕົກລົງເຫັນດີອະນຸມັດຮັບຮອງເອົາເອກະສານລາຍງານການເງິນນະວັນທີ 31 ມີນາ 2026 ແລະ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວທີ່ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ

ໃນນາມຄະນະບໍລິຫານ

ທ່ານ ມານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ
12 ພຶດສະພາ 2026

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 31 ມີນາ 2026

	ບົດ ອະທິບາຍ	"ບໍ່ໄດ້ກວດສອບ" 31 ມີນາ 2026 ກີບ	"ກວດສອບ" 31 ທັນວາ 2025 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ທຽບເທົ່າເງິນສົດ	4	433,859,431	598,459,960
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	5	58,825,400,720	56,789,226,059
ຊັບສິນລໍຖ້າການຂາຍ	6	1,682,607,362	1,929,234,368
ຊັບສິນໝຸນວຽນອື່ນໆ	7	1,187,830,476	1,312,932,438
ລວມຊັບສິນໝຸນວຽນ		**62,129,697,989**	**60,629,852,825**
ຊັບສິນບໍ່ໝຸນວຽນ			
ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ		2,000,002,700	2,000,002,700
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	5	50,045,016,582	46,153,855,179
ຊັບສິນມີຕົວຕົນ, ສຸດທິ	8	653,867,150	633,231,597
ຊັບສິນບໍ່ມີຕົວຕົນ, ສຸດທິ	9	4	4
ຊັບສິນບໍ່ໝຸນວຽນ ອື່ນໆ		5,003,500	10,003,000
ລວມຊັບສິນບໍ່ໝຸນວຽນ		**52,703,889,936**	**48,797,092,480**
ລວມຊັບສິນທັງໝົດ		**114,833,587,925**	**109,426,945,305**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫຍ່

ວັນທີ: 12 ພຶດສະພາ 2026

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 12 ພຶດສະພາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານຖານະການເງິນ
ໃນວັນທີ 31 ມີນາ 2026

	ບິດ ອະທິບາຍ	"ບໍ່ໄດ້ກວດສອບ" 31 ມີນາ 2026 ກີບ	"ກວດສອບ" 31 ທັນວາ 2025 ກີບ
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ເຈົ້າໜີ້ການຄ້າ ແລະ ເຈົ້າໜີ້ອື່ນໆ	10	3,363,982,316	4,431,630,401
ອາກອນລາຍໄດ້ຕ້ອງຊຳລະ		1,700,471,178	2,506,386,592
ເງິນກູ້ຢືມໄລຍະສັ້ນ	11	6,428,200,000	7,000,000,000
ໜີ້ໝຸນວຽນອື່ນໆ		42,623,057	49,959,762
ລວມໜີ້ສິນໝຸນວຽນ		**11,535,276,551**	**13,987,976,755**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	12	9,000,000,000	4,000,000,000
ໜີ້ສິນບໍ່ໝຸນວຽນອື່ນໆ		184,400,000	187,475,000
ລວມໜີ້ສິນບໍ່ໝຸນວຽນ		**9,184,400,000**	**4,187,475,000**
ລວມໜີ້ສິນທັງໝົດ		**20,719,676,551**	**18,175,451,755**
ທຶນເຈົ້າຂອງ			
ທຶນຜູ້ຖືຮຸ້ນ		40,000,000,000	40,000,000,000
ສ່ວນເພີ່ມມູນຄ່າຮຸ້ນ		12,832,667,550	12,832,667,550
ກຳໄລສະສົມ			
ຄັງສຳຮອງຕາມກົດໝາຍ	13	7,523,815,481	7,523,815,481
ກຳໄລສະສົມທີ່ຍັງບໍ່ໄດ້ຈັດສັນ		33,757,422,343	30,895,010,519
ລວມທຶນເຈົ້າຂອງ		**94,113,905,374**	**91,251,493,550**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**114,833,581,925**	**109,426,945,305**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫຍ່

ວັນທີ: 12 ພຶດສະພາ 2026

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 12 ພຶດສະພາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2026

	ບິດ ອະທິບາຍ	"ບໍ່ໄດ້ກວດສອບ" 31 ມີນາ 2026 ກີບ	"ບໍ່ໄດ້ກວດສອບ" 31 ມີນາ 2025 ກີບ
ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ ແລະ ສິນເຊື່ອຜ່ອນຊຳລະ, ສຸດທິ		11,041,848,185	8,803,444,091
		11,041,848,185	**8,803,444,091**
ລາຍຮັບອື່ນ	16	327,749,802	418,577,951
ລາຍຈ່າຍບໍລິຫານ	17	(6,064,012,307)	(5,583,792,047)
ສຳຮອງໜີ້ສົງໄສຈະເສຍ ແລະ ໜີ້ສູນ		(1,126,971,434)	(891,991,253)
ຂາດທຶນຈາກອັດຕາແລກປ່ຽນ, ສຸດທິ		(2,474,040)	(18,637,718)
ກຳໄລຈາກການດຳເນີນງານ		**4,176,140,206**	**2,727,601,024**
ລາຍຈ່າຍການເງິນ		(599,643,796)	(31,055,555)
ກຳໄລກ່ອນອາກອນ		**3,576,496,410**	**2,696,545,469**
ລາຍຈ່າຍອາກອນ	18	(714,084,586)	(544,207,623)
ກຳໄລສຸດທິໃນງວດ		**2,862,411,824**	**2,152,337,846**
ກຳໄລ ຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	14	7.16	5.38

ທ່ານ ມານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫຍ່

ວັນທີ: 12 ພຶດສະພາ 2026

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 12 ພຶດສະພາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2026

	ບົດອະທິບາຍ	ທຶນຜູ້ຖືຮຸ້ນ	ສ່ວນເພີ່ມມູນຄ່າຮຸ້ນ	ກຳໄລສະສົມ		ລວມ
				ຄ້ຳສຳຮອງຕາມກົດໝາຍ	ກຳໄລສະສົມທີ່ຍັງບໍ່ໄດ້ຈັດສັນ	
		ກີບ	ກີບ	ກີບ	ກີບ	ກີບ
ໃນວັນທີ 1 ມັງກອນ 2025		40,000,000,000	12,832,667,550	6,486,859,985	21,562,411,058	80,881,938,593
ກຳໄລໃນງວດ		-	-	-	2,152,337,846	2,152,337,846
ໃນວັນທີ 31 ມີນາ 2025		**40,000,000,000**	**12,832,667,550**	**6,486,859,985**	**23,714,748,904**	**83,034,276,439**
ໃນວັນທີ 1 ມັງກອນ 2026		40,000,000,000	12,832,667,550	7,523,815,481	30,895,010,519	91,251,493,550
ກຳໄລໃນງວດ		-	-	-	2,862,411,824	2,862,411,824
ໃນວັນທີ 31 ມີນາ 2026		**40,000,000,000**	**12,832,667,550**	**7,523,815,481**	**33,757,422,343**	**94,113,905,374**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 12 ພຶດສະພາ 2026

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 12 ພຶດສະພາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2026

	ບົດອະທິບາຍ	"ບໍ່ໄດ້ກວດສອບ" 31 ມີນາ 2026 ກີບ	"ບໍ່ໄດ້ກວດສອບ" 31 ມີນາ 2025 ກີບ
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ:			
ກຳໄລກ່ອນອາກອນ		3,576,496,410	2,696,545,469
ດັດແກ້ເພື່ອສົມທຽບກຳໄລ ແລະ ເງິນສົດສຸດທິ			
ສຳຮອງໜີ້ສົງໄສຈະເສຍ ແລະ ໜີ້ສູນ	5	1,126,971,434	891,991,253
ຄ່ານາຍໜ້າລໍຖ້າຕັດບັນຊີ		407,220,315	236,965,614
ຂາດທຶນຈາກການສູນເສຍມູນຄ່າຂອງຊັບສິນລໍຖ້າຂາຍ		(7,500,000)	3,750,000
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	8, 9	60,350,784	55,936,116
ລາຍຈ່າຍການເງິນ		599,643,796	31,055,555
ຂາດທຶນຈາກອັດຕາແລກປ່ຽນ		1,426,600	20,742,648
ກະແສເງິນສົດກ່ອນການປ່ຽນແປງໃນເງິນທຶນໝຸນວຽນ		**5,764,609,339**	**3,936,986,655**
ການປ່ຽນແປງທຶນໝຸນວຽນ:			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ຜ່ອນຊຳລະ		(6,977,077,813)	(7,945,064,249)
ຊັບສິນລໍຖ້າການຂາຍ		254,127,006	(75,108,778)
ຊັບສິນໝຸນວຽນ ແລະ ບໍ່ໝຸນວຽນ		130,101,462	(237,839,964)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(1,120,661,784)	(518,812,855)
ໜີ້ສິນໝຸນວຽນອື່ນໆ		(7,304,791)	(20,113,562)
ໜີ້ສິນບໍ່ໝຸນວຽນອື່ນໆ		(3,075,000)	4,500,000
ກະແສເງິນສົດ (ໃຊ້ໃນ) ຈາກກິດຈະກຳການດຳເນີນງານ		**(1,959,281,581)**	**(4,855,452,753)**
ລາຍຈ່າຍຄ່ານາຍໜ້າ		(484,450,000)	(469,450,000)
ລາຍຈ່າຍດອກເບ້ຍ		(546,630,097)	(31,055,555)
ລາຍຈ່າຍອາກອນ		(1,520,000,000)	(50,000,000)
ເງິນສົດສຸດທິ (ໃຊ້ໃນ) ຈາກກິດຈະກຳການດຳເນີນງານ		**(4,510,361,678)**	**(5,405,958,308)**

ທ່ານ ມານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 12 ພຶດສະພາ 2026

ທ່ານ ນາງ ສຸລີພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 12 ພຶດສະພາ 2026

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2026

	ບົດອະທິບາຍ	"ບໍ່ໄດ້ກວດສອບ" 31 ມີນາ 2026 ກີບ	"ບໍ່ໄດ້ກວດສອບ" 31 ມີນາ 2025 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຈ່າຍເງິນຊື້ຊັບສິນມີຕົວຕົນ	8	(80,986,337)	(104,215,000)
ເງິນສົດສຸດທິ (ໃຊ້ໄປ) ຈາກກິດຈະກຳການລົງທຶນ		**(80,986,337)**	**(104,215,000)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການກູ້ຢືມ	11,12	12,000,000,000	6,000,000,000
ຊຳລະເງິນກູ້	11	(7,571,800,000)	-
ເງິນສົດສຸດທິຈາກ (ໃຊ້ໄປ) ກິດຈະກຳການເງິນ		**4,428,200,000**	**6,000,000,000**
(ຫຼຸດລົງ)/ເພີ່ມຂຶ້ນ ສຸດທິ ຂອງເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(163,148,015)	489,826,692
ເງິນສົດ ແລະ ລາຍການທຽບເທົ່າ ເງິນສົດໃນຕົ້ນງວດ		598,459,960	3,766,310,317
ກຳໄລ(ຂາດທຶນ) ສຸດທິ ຈາກອັດຕາແລກປ່ຽນໄປເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(1,458,514)	(18,315,039)
ເງິນສົດ ແລະ ລາຍການທຽບເທົ່າ ເງິນສົດໃນທ້າຍງວດ	4	**433,853,431**	**4,237,821,970**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫຍ່

ວັນທີ: 12 ພຶດສະພາ 2026

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຮັກສາການຜູ້ອຳນວຍການຝ່າຍການເງິນ

ວັນທີ: 12 ພຶດສະພາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 16 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໂດຍຫຍໍ້
ສຳລັບໄລຍະສາມເດືອນສິ້ນສຸດ ວັນທີ 31 ມີນາ 2026 "ບໍ່ໄດ້ກວດສອບ"

1 ຂໍ້ມູນທົ່ວໄປ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດທີ່ໄດ້ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ທີ່ໄດ້ຈົດທະບຽນ ຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 2 ກັນຍາ 2011. ບໍລິສັດໄດ້ເລີ່ມດຳເນີນທຸລະກິດພາຍຫຼັງທີ່ໄດ້ຮັບໃບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃນວັນທີ 11 ມິຖຸນາ 2012.

ເມື່ອວັນທີ 13 ມິຖຸນາ 2018, ບໍລິສັດ ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ຈຳໜ່າຍຮຸ້ນແກ່ປະຊາຊົນທົ່ວໄປເປັນຄັ້ງທຳອິດ.

ສຳນັກງານໃຫຍ່ຂອງບໍລິສັດ ຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, ກິໂລແມັດ 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກ ຂອງບໍລິສັດແມ່ນການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນເພື່ອຊື້ ລົດຈັກ, ລົດໄຖ ແລະ ຄຳ.

ເອກະສານລາຍງານການເງິນ ໄດ້ມີການອະນຸມັດໃຫ້ອອກບົດລາຍງານ ໂດຍ ຄະນະບໍລິຫານຂອງບໍລິສັດ ໃນວັນທີ 12 ພຶດສະພາ 2026.

2 ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນການປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຂອງຕົນເອງ ແລະ ໃບລາຍງານກະແສເງິນສົດ ຖືການຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2025.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ, ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO) ເລກທີ 0009/ຄຄຊ ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ PIEs ໃນການຈັດການເຮັດແຜນປະຕິບັດການ ສຳລັບການນຳໃຊ້ມາດຕະຖານການລາຍງານບັນຊີສາກົນ (IFRS) ຈົນຮອດວັນທີ 31 ທັນວາ 2025 ແລະ ນັບແຕ່ປີ 2026 ເປັນຕົ້ນໄປ, ບໍລິສັດຈົດທະບຽນທັງໝົດຕ້ອງຮັບຮອງເອົາ IFRS ຢ່າງເຕັມສ່ວນ. ເຊິ່ງຄະນະບໍລິຫານກຳລັງກະກຽມການນຳໃຊ້ IFRS ອີງຕາມການແຈ້ງການດັ່ງກ່າວ. ສະນັ້ນຫຼັກການບັນຊີທີ່ນຳໃຊ້ອາດຈະແຕກຕ່າງຢ່າງມີສາລະສຳຄັນ ຈາກບົດລາຍງານການເງິນຕາມມາດຕະຖານການລາຍງານການເງິນສາກົນ (IFRS)

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3 ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານໃຊ້ດຸນຍພິນິດ, ການຄາດຄະເນ ແລະ ການສົມມຸດຕິຖານທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກ ຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານສະບັບນີ້, ຜູ້ບໍລິຫານໄດ້ຕັດສິນໃຈທີ່ມີສຳລະສຳຄັນຂອງນະໂຍບາຍການບັນຊີ ຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນຂອງຄວາມບໍ່ແນ່ນອນຂອງການປະມານການເຊັ່ນດຽວກັບທີ່ໃຊ້ກັບເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2025.

4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ	ກວດສອບ
	31 ມີນາ 2026 ກີບ	31 ທັນວາ 2025 ກີບ
ເງິນສົດໃນມື	7,638,628	15,625,200
ເງິນຝາກໃນທະນາຄານທີ່ສາມາດຮຽກເກັບໄດ້ໃນເວລາທີ່ຕ້ອງການ[(i)]	426,214,803	582,834,760
ລວມ	**433,853,431**	**598,459,960**

(i) ເງິນຝາກໃນທະນະຄານລວມມີສາມສະກຸນເງິນຄືສະກຸນກີບ, ບາດ ແລະ ໂດລາ ໃນບັນຊີເງິນຝາກກະແສລາຍວັນ ກັບທະນາຄານພາຍໃນປະເທດ ແລະ ສາຂາທະນາຄານຕ່າງປະເທດໃນລາວ.

5 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ

ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ ໃນວັນທີ 31 ມີນາ 2026 ແລະ ໃນວັນທີ 31 ທັນວາ 2025 ປະກອບມີ:

	ທົບທວນຄືນ 31 ມີນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໝຸນວຽນ		
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ	679,553,346	595,319,051
ສັດສ່ວນໝຸນວຽນຂອງລູກໜີ້ສິນເຊື່ອຜ່ອນຊຳລະ	69,847,010,905	67,107,274,649
	70,526,564,251	**67,702,593,700**
ເພີ່ມ ຕົ້ນທຶນທາງກົງ	640,130,157	582,834,279
ຫັກ ສຳຮອງໜີ້ສົງໄສຈະສູນ	(12,341,293,688)	(11,496,201,920)
	58,825,400,720	**56,789,226,059**
ບໍ່ໝຸນວຽນ		
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	620,108,262	549,523,193
ລູກໜີ້ສິນເຊື່ອຜ່ອນຊຳລະ	49,504,876,461	45,402,362,268
	50,124,984,723	**45,951,885,461**
ເພີ່ມ ຕົ້ນທຶນທາງກົງ	954,614,504	934,680,697
ຫັກ ສຳຮອງໜີ້ສົງໄສຈະສູນ	(1,034,582,645)	(732,710,979)
	50,045,016,582	**46,153,855,179**
ລວມ	**108,870,417,302**	**102,943,081,238**

ໃນວັນທີ 31 ມີນາ 2026 ແລະ 31 ທັນວາ 2025, ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບເງິນກູ້ຜ່ອນຊຳລະໃນໃບລາຍງານຖານະການເງິນ, ສາມາດວິເຄາະອາຍຸການໄດ້ດັ່ງນີ້:

	ທົບທວນຄືນ 31 ມີນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ບໍ່ຄົບກຳນົດ	90,840,922,345	87,948,861,615
1 - 3 ເດືອນ	16,350,641,359	13,270,425,270
4 ເດືອນ	862,618,016	780,351,396
5 - 6 ເດືອນ	1,293,949,738	1,343,140,594
ເກີນ 6 ເດືອນ	11,303,417,516	10,311,700,287
	120,651,548,974	**113,654,479,162**
ເພີ່ມ ຕົ້ນທຶນທາງກົງ	1,594,744,661	1,517,514,975
ຫັກ ສຳຮອງໜີ້ສົງໄສຈະສູນ	(13,375,876,333)	(12,228,912,899)
ລວມ	**108,870,417,302**	**102,943,081,238**

6 ຊັບສິນລໍຖ້າຂາຍ, ສຸດທິ

	ທົບທວນຄືນ 31 ມີນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ລິດຈັກ	1,752,607,362	2,006,734,368
ຫັກ ເງິນແຮກການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ	(70,000,000)	(77,500,000)
ລວມ	**1,682,607,362**	**1,929,234,368**

7 ຊັບສິນໝຸນວຽນອື່ນໆ

	ທົບທວນຄືນ 31 ມີນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ລາຍຈ່າຍລ່ວງໜ້າ	906,283,787	1,006,388,402
ຊຳລະເງິນລ່ວງໜ້າ	162,104,963	67,040,322
ອື່ນໆ	119,441,726	239,503,714
ລວມ	**1,187,830,476**	**1,312,932,438**

8 ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 31 ທັນວາ 2025 - ກວດສອບ	633,231,597
ເພີ່ມຂຶ້ນ	80,986,337
ຫັກ: ຄ່າຫຼຸ້ຍຫ້ຽນ	(60,350,784)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ມີນາ 2026 - ທົບທວນຄືນ	**653,867,150**

9 ຊັບສິນບໍ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 31 ທັນວາ 2025 - ກວດສອບ	4
ເພີ່ມຂຶ້ນ	-
ຫັກ: ຄ່າເສື່ອມມູນຄ່າ	(-)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ມີນາ 2026 - ທົບທວນຄືນ	**4**

10 ໜີ້ຕ້ອງສິ່ງທາງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ

	ທົບທວນຄືນ 31 ມີນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຄ່າໃຊ້ຈ່າຍຄ້າງຈ່າຍ	1,608,849,851	2,012,890,700
ໜີ້ຕ້ອງສິ່ງທາງການຄ້າ	1,631,704,000	2,299,321,000
ໜີ້ຕ້ອງສິ່ງອາກອນ	123,428,465	119,418,701
ລວມ	**3,363,982,316**	**4,431,630,401**

11. ເງິນກູ້ຢືມໄລຍະສັ້ນ

ການເຄື່ອນໄຫວເງິນກູ້ຢືມໄລຍະສັ້ນ ສຳລັບໄລຍະສາມເດືອນສິ້ນສຸດ ວັນທີ 31 ມີນາ 2026 ແລະ 31 ທັນວາ 2025 ມີດັ່ງນີ້:

	ທົບທວນຄືນ 31 ມີນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຍອດຍົກມາມູນຄ່າຕາມບັນຊີ. ສຸດທິ	7,000,000,000	-
ເງິນກູ້ຢືມທີ່ເພີ່ມ	7,000,000,000	15,700,000,000
ຊຳລະເງິນກູ້ຢືມຄືນ	(7,571,800,000)	(8,700,000,000)
ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ	**6,428,200,000**	**7,000,000,000**

ເງິນກູ້ຢືມໄລຍະສັ້ນຈາກທະນາຄານພາຍໃນ:

- **ປີ 2025:** ໃນວັນທີ 11 ມີນາ 2025, ບໍລິສັດໄດ້ລົງນາມສັນຍາເງິນກູ້ ໃນວົງເງິນ 7 ຕື້ກີບ, ໄລຍະເວລາ 12 ເດືອນ, ອັດຕາດອກເບ້ຍ 12% ຕໍ່ປີ. ວົງເງິນກູ້ນີ້ບໍ່ມີຫຼັກຊັບຄ້ຳປະກັນ ແຕ່ບໍລິສັດໄດ້ອະນຸຍາດໃຫ້ທະນາຄານຕັດເງິນຈາກບັນຊີຮັບຄ່າເຊົ່າໃນ ກໍລະນີທີ່ບໍ່ສາມາດຈ່າຍຄືນຕາມກຳນົດ.
- **ປີ 2026 (ການຕໍ່ສັນຍາ):** ໃນວັນທີ 11 ມີນາ 2026, ບໍລິສັດໄດ້ຊຳລະຄືນເງິນກູ້ຄົງຄ້າງທັງໝົດພາຍໃຕ້ສັນຍາສະບັບເດີມແລ້ວ. ໃນວັນດຽວກັນ, ບໍລິສັດໄດ້ລົງນາມສັນຍາກູ້ຢືມເງິນສະບັບໃໝ່ ໃນວົງເງິນ 7 ຕື້ກີບ, ອັດຕາດອກເບ້ຍ 12% ຕໍ່ປີ, ໂດຍປ່ຽນ ຮູບແບບການຊຳລະຄືນເປັນງວດປະຈຳເດືອນ (ທັງເງິນຕົ້ນແລະດອກເບ້ຍ) ໄລຍະເວລາ 12 ເດືອນ ເຊິ່ງຈະສິ້ນສຸດໃນວັນທີ 11 ມີນາ 2027. ສ່ວນຂໍ້ກຳນົດແລະເງື່ອນໄຂອື່ນໆ ລວມທັງການຕັດເງິນຈາກບັນຊີຮັບຄ່າເຊົ່າ ແມ່ນຍັງຄົງບໍ່ມີການປ່ຽນແປງ.

12. ເງິນກູ້ຢືມໄລຍະຍາວ

ການເຄື່ອນໄຫວເງິນກູ້ຢືມໄລຍະຍາວ ສຳລັບໄລຍະສາມເດືອນສິ້ນສຸດ ວັນທີ 31 ມີນາ 2026 ແລະ 31 ທັນວາ 2025 ມີດັ່ງນີ້:

	ທົບທວນຄືນ 31 ມີນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຍອດຍົກມາມູນຄ່າຕາມບັນຊີ. ສຸດທິ	4,000,000,000	-
ເງິນກູ້ຢືມທີ່ເພີ່ມ	5,000,000,000	4,000,000,000
ຊຳລະເງິນກູ້ຢືມຄືນ	-	-
ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ	**9,000,000,000**	**4,000,000,000**

ເງິນກູ້ຢືມໄລຍະຍາວຈາກທະນາຄານພາຍໃນ:

- **ປີ 2025** : ໃນວັນທີ 13 ມີນາ 2025, ບໍລິສັດໄດ້ລົງນາມສັນຍາກູ້ຢືມເງິນກັບທະນາຄານພາຍໃນ ໃນວົງເງິນ 4 ຕື້ກີບ, ໄລຍະເວລາ 36 ເດືອນ, ອັດຕາດອກເບ້ຍ 14.5% ຕໍ່ປີ. ວົງເງິນກູ້ນີ້ມີກຳນົດຊຳລະດອກເບ້ຍເປັນປະຈຳທຸກເດືອນ ແລະ ຊຳລະຄືນເງິນຕົ້ນທັງໝົດໃນວັນຄົບກຳນົດສັນຍາ ວັນທີ 11 ມີນາ 2028. ທັງນີ້, ວົງເງິນກູ້ຢືມດັ່ງກ່າວແມ່ນມີຫຼັກຊັບຄ້ຳປະກັນ ເປັນເງິນຝາກປະຈຳຂອງບໍລິສັດແມ່ ເປັນມູນຄ່າ 200,000 ໂດລາສະຫະລັດ.
- **ປີ 2026 :** ໃນວັນທີ 5 ມັງກອນ 2026, ບໍລິສັດໄດ້ລົງນາມສັນຍາກູ້ຢືມເງິນ ວົງເງິນໝຸນວຽນກັບທະນາຄານພາຍໃນ ໃນວົງເງິນ 5 ຕື້ກີບ, ໄລຍະເວລາ 36 ເດືອນ, ອັດຕາດອກເບ້ຍ 13% ຕໍ່ປີ. ວົງເງິນກູ້ນີ້ມີກຳນົດຊຳລະດອກເບ້ຍເປັນປະຈຳທຸກເດືອນ ແລະ ຊຳລະຄືນເງິນຕົ້ນທັງໝົດໃນວັນຄົບກຳນົດສັນຍາ. ທັງນີ້, ວົງເງິນກູ້ຢືມດັ່ງກ່າວແມ່ນມີຫຼັກຊັບຄ້ຳປະກັນ ເປັນທີ່ດິນຂອງ ບຸກຄົນທີສາມ.

13. ຄັງສະສົມຕາມລະບຽບການ

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ຕາມມາດຕາ 156 ເຊິ່ງກຳນົດການຈັດສັນກຳໄລເປັນຄັງສຳຮອງຕາມກົດໝາຍຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີ ຈົນກວ່າຈະບັນລຸ 50% ຂອງທຶນຮຸ້ນທີ່ໄດ້ຮັບອະນຸຍາດ.

14. ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການຫານກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍສະເລ່ຍຕາມຈຳນວນຂອງຮຸ້ນສາມັນ ທີ່ອອກໃນລະຫວ່າງໄລຍະ, ປັບປຸງຕາມຜົນກະທົບຈາກການປ່ຽນແປງຂອງມູນຄ່າກຳນົດຂອງຮຸ້ນ ເພື່ອປຽບທຽບດັ່ງຕໍ່ໄປນີ້:

	ທົບທວນຄືນ 31 ມີນາ 2026 LAK	ທົບທວນຄືນ 31 ມີນາ 2025 LAK
ກຳໄລສຸດທິທີ່ເປັນຂອງຜູ້ຖືຮຸ້ນສາມັນ (ກີບ)	2,862,411,824	2,152,337,846
ສະເລ່ຍຕາມຈຳນວນຂອງຮຸ້ນສາມັນທີ່ອອກ (ຮຸ້ນ)	400.000.000	400.000.000
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	**7.16**	**5.38**

15. ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2025 ໃນວັນທີ 21 ເມສາ 2026. ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2025 ໃນມູນຄ່າ 16 ກີບຕໍ່ຮຸ້ນ. ລວມມູນຄ່າ 6,400 ລ້ານກີບ ແລະ ຈັດສັນກຳໄລສຸດທິ ເພື່ອສຳຮອງຕາມກົດໝາຍຈຳນວນເງິນ 1,036.96 ລ້ານກີບ.

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2024 ໃນວັນທີ 24 ເມສາ 2025, ຜູ້ຖືຮຸ້ນໄດ້ອະນຸມັດການຈັດສັນກຳໄລສຸດທິເພື່ອສຳຮອງຕາມກົດໝາຍ ຈຳນວນເງິນ 664.6 ລ້ານກີບ ແລະ ບໍ່ມີການຈ່າຍເງິນປັນຜົນສຳລັບຜົນການດຳເນີນງານໃນ 31 ທັນວາ 2024 ເພື່ອສຳຮອງກະແສເງິນສົດໃນການຮອງຮັບການຂະຫຍາຍທຸລະກິດໃນງົບປະມານປີ 2025.

16. ລາຍຮັບອື່ນ

ລາຍຮັບອື່ນ ສຳລັບໄລຍະສາມເດືອນສິ້ນສຸດ ວັນທີ 31 ມີນາ, ມີດັ່ງລຸ່ມນີ້:

	ທົບທວນຄືນ 31 ມີນາ 2026 ກີບ	ທົບທວນຄືນ 31 ມີນາ 2025 ກີບ
ລາຍຮັບດອກເບ້ຍຈາກເງິນຝາກທະນາຄານ	1,836,355	34,661,376
ຄ່າປັບໃໝ	263,376,622	361,320,283
ລາຍຮັບອື່ນໆ	62,536,825	22,596,292
ລວມ	**327,749,802**	**418,577,951**

ຄ່າປັບໃໝ - ໝາຍເຖິງຄ່າປັບໃໝສຳລັບການຊຳລະເງິນຊ້າຈາກລູກຄ້າພາຍໃນງວດສາມເດືອນ.

17. ລາຍຈ່າຍໃນການບໍລິຫານ

	ທົບທວນຄືນ 31 ມີນາ 2026 ກີບ	ທົບທວນຄືນ 31 ມີນາ 2025 ກີບ
ລາຍຈ່າຍພະນັກງານ	3,188,920,893	3,300,248,610
ລາຍຈ່າຍການຕະຫຼາດ ແລະ ໂຄສະນາ	434,499,910	423,963,198
ຄ່າທີ່ປຶກສາ ແລະ ກວດສອບບັນຊີ	323,239,947	319,303,598
ຄ່າເດີນທາງ ແລະ ຄ່າຂົນສົ່ງ	385,300,119	353,218,918
ຄ່າຕອບແທນຜູ້ບໍລິຫານ	380,000,000	354,500,000
ລາຍຈ່າຍສາທະນຸປະໂພກ	327,028,593	320,996,447
ຂາດທຶນສຸດທິຈາກການຂາຍຊັບສິນ ລໍຖ້າຂາຍ	340,418,205	11,222,426
ຄ່າຫຼຸ້ນຫ້ຽນ	60,350,784	55,936,116
ລາຍຈ່າຍອື່ນໆ(*)	624,253,856	444,402,734
ລວມ	**6,064,012,307**	**5,583,792,047**

(*) ລາຍຈ່າຍອື່ນໆຫຼັກໆແລ້ວປະກອບດ້ວຍ ຄ່າສ້ອມແປງແລະບຳລຸງຮັກສາ ຈຳນວນ 84 ລ້ານກີບ, ຄ່າອຸປະກອນຫ້ອງການ ຈຳນວນ 130 ລ້ານກີບ, ຄ່າຈ້າງພາຍນອກຝັດທະນາລະບົບໄອທີ (IT) ຈຳນວນ 105 ລ້ານກີບ, ຄ່າທຳນຽມທະນາຄານ ຈຳນວນ 66 ລ້ານກີບ, ຄ່າຮັບແຂກແລະສະຫວັດດີການພະນັກງານ ຈຳນວນ 95 ລ້ານກີບ ແລະ ແລະ ລາຍຈ່າຍອື່ນໆ.

18. ອາກອນກຳໄລ

ຢູ່ ສປປ ລາວ, ການຄຶນພາສີລາຍຮັບແມ່ນໄດ້ຮັບການກວດກາຄືນຢ່າງເປັນປົກກະຕິໂດຍເຈົ້າໜ້າທີ່ທີ່ກ່ຽວຂ້ອງ. ນອກນີ້ ບັນຫາພາສີທີ່ຍົກອອກມາໃນການທົບທວນຄືນອາດຈະຕ້ອງມີການຕັດສິນ ແລະ ຕີລາຄາຢ່າງຕັ້ງໜ້າຈາກຝ່າຍຕ່າງໆ.

ດັ່ງນັ້ນ, ການທົບທວນຄືນອາດຈະເຮັດໃຫ້ມີການຊຳລະພາສີເພີ່ມເຕີມ ຫຼື ການສົ່ງເງິນຄືນແມ່ນມີຄວາມຈຳເປັນທີ່ອາດຈະມີຄວາມສຳຄັນ ເຊິ່ງຈະສົ່ງຜົນໃຫ້ມີການດັດແກ້ບັນຊີອາກອນລາຍໄດ້ໃນປີທີ່ໄດ້ທົບທວນຄືນ ຂອງເຈົ້າໜ້າທີ່ສ່ວຍສາອາກອນ.

ສຳລັບໄລຍະສາມເດືອນສິ້ນສຸດ ວັນທີ 31 ມີນາ 2026, ບໍລິສັດໄດ້ຮັບຮູ້ລາຍຈ່າຍອາກອນລາຍໄດ້ໃນໃບລາຍງານຜົນລາຍຮັບ 714 ລ້ານກີບ (2025: 544 ລ້ານກີບ)

ການຄຳນວນອາກອນກຳໄລມີດັ່ງນີ້:

	ກີບ
ກຳໄລກ່ອນອາກອນກຳໄລ - ທາງບັນຊີ	3,576,496,410
ລາຍການທີ່ມີຜົນທາງອາກອນ:	
➢ ເກັບຄືນເງິນແຮສຳລັບການເສຍມູນຄ່າຂອງຊັບສິນລໍຖ້າຂາຍ	(7,500,000)
➢ ຂາດທຶນອັດຕາແລກປ່ຽນຈາກການຕີມູນຄ່າທ້າຍງວດ	1,426,522
ລາຍໄດ້ທາງອາກອນ	**3,570,422,932**
ລາຍຈ່າຍອາກອນກຳໄລໃນອັດຕາ 20%	**714,084,586**

19. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບສາມເດືອນສິ້ນສຸດ ວັນທີ 31 ມີນາ 2026 ແລະ 2025 ບໍລິສັດ ບໍ່ມີລາຍການເຄື່ອນໄຫວຮ່ວມກັບບຸກຄົນ ຫຼື ກິດຈະການທີ່ກ່ຽວຂ້ອງກັນ.

ຂ. ຄ່າຕອບແທນຂອງຜູ້ບໍລິຫານ

ລາຍການຄ່າຕອບແທນຂອງຜູ້ບໍລິຫານ ສຳລັບສາມເດືອນສິ້ນສຸດ ວັນທີ 31 ມີນາ 2026 ແລະ 2025 ມີດັ່ງນີ້:

	ທົບທວນຄືນ 31 ມີນາ 2026 ກີບ	ທົບທວນຄືນ 31 ມີນາ 2025 ກີບ
ຜົນປະໂຫຍດໄລຍະສັ້ນ	380,000,000	354,500,000

20. ພາລະຜູກພັນ

ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານ

ບໍລິສັດ ມີພາລະຜູກພັນຕາມສັນຍາເຊົ່າພື້ນທີ່ສຳນັກງານໄລຍະຍາວ ສຳລັບການເຊົ່າພື້ນທີ່ຫ້ອງການ

ໃນວັນທີ 31 ມີນາ 2026 ແລະ ວັນທີ 31 ທັນວາ 2025, ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານແຕ່ບໍ່ໄດ້ຮັບຮູ້ເປັນໜີ້ສິນມີດັ່ງນີ້:

	ທົບທວນຄືນ 31 ມີນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ພາຍໃນ 1 ປີ	584,969,262	338,966,035
ເກີນ 1 ປີ ແຕ່ບໍ່ເກີນ 5 ປີ	1,860,115,314	2,127,629,549
ລວມ	**2,445,084,576**	**2,466,595,584**

21. ເຫດການເກີດຂຶ້ນພາຍຫຼັງວັນທີ່ອອກບົດລາຍງານທາງການເງິນ

ໃນເດືອນເມສາ ປີ 2026 ບໍລິສັດໄດ້ລົງນາມສັນຍາກູ້ຢືມເງິນກັບທະນາຄານພາຍໃນ ໃນວົງເງິນ 34 ຕື້ກີບ. ວົງເງິນກູ້ນີ້ແມ່ນຢູ່ໃນຮູບແບບວົງເງິນສິນເຊື່ອໝຸນວຽນ ໂດຍມີໄລຍະເວລາ 3 ປີ, ອັດຕາດອກເບ້ຍ 7.92% ຕໍ່ປີ. ກຳນົດຊຳລະດອກເບ້ຍແມ່ນປະຈຳທຸກເດືອນ ແລະ ຊຳລະຄືນເງິນຕົ້ນບາງສ່ວນ ຫຼື ທັງໝົດໃນທຸກໆ 6 ເດືອນ. ທັງນີ້, ວົງເງິນກູ້ຢືມດັ່ງກ່າວແມ່ນມີຫຼັກຊັບຄ້ຳປະກັນ ເປັນໜັງສືຄ້ຳປະກັນປະເພດ Standby Letter of Credit (SBLC) ທີ່ອອກໂດຍສະຖາບັນການເງິນ.